ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານໂພນພະເນົາ ວຽງຈັນ, ສ.ປ.ປ.ລາວ ຕູ້ປນ 6821, ໂທຣ: (865-21) 451222, 451116 ແຟັກ: 451117

PHONPHANAO VILLAGE,VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222, 451116 FAX: 451117

E-mail:Lcc@laocement.com,www.laocement.com

ເລກທີ 282/ບຊລ - [illegible]

ນະຄອນຫຼວງວຽງຈັນ, ວັນທີ 03 DEC 2020

ຮຽນ : ທ່ານ ຜູ້ຖືຮຸ້ນ ຂອງບໍລິສັດ ຊີມັງລາວ ມະຫາຊົນ

ເລື່ອງ : ເຊີນເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ປະຈຳປີ 2020

- ອີງຕາມການຕົກລົງເຫັນດີຂອງກອງປະຊຸມສະພາບໍລິຫານຄັ້ງວັນທີ 30/11/2020.
- ອີງຕາມບັນຊີທະບຽນຜູ້ຖືຮຸ້ນຈາກສຳນັກງານຕະຫຼາດຫຼັກຊັບລາວ.

ບໍລິສັດ ຊີມັງລາວ ມະຫາຊົນ ຂໍຖືເປັນກຽດຮຽນເຊີນທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ບຊລ ເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ປະຈຳປີ 2020 ໃນວັນທີ 28/12/2020 ເວລາ 14:00 ໂມງ,ເລີ່ມລົງທະບຽນເວລາ 13:00 - 14:00 ໂມງ, ທີ່ຫ້ອງປະຊຸມໃຫ່ຍຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫວງວຽງຈັນ ສປປລາວ ເພື່ອພິຈາລະນາ ແລະຮັບຮອງເອົາມະຕິຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ບໍລິສັດ ບຊລ ໄດ້ແຈ້ງໃຫ້ຕະຫຼາດຫຼັກຊັບລາວ ໃນການກຳນົດເອົາວັນທີ 01/12/2020 ເປັນມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ປະຈຳປີ 2020 ສະນັ້ນ, ບໍລິສັດ ບຊລ ຈຶ່ງຖືເອົາຕາມບັນຊີທະບຽນຜູ້ຖືຮຸ້ນ ຈາກບໍລິສັດ ຕະຫຼາດຫຼັກຊັບລາວ ເພື່ອກຳນົດສິດດັ່ງກ່າວຂອງຜູ້ຖືຮຸ້ນ.

ຜູ້ຖືຮຸ້ນແຕ່ລະທ່ານ ຈະຕ້ອງໄດ້ເອົາໜັງສືເຊີນປະຊຸມທີ່ລະບຸສິດຂອງທ່ານ ເຂົ້າໃນການເຂົ້າຮ່ວມກອງປະຊຸມ (ມີລະຫັດບາໂຄດ) ພ້ອມເອກະສານຄັດຕິດຕ່າງໆຢູ່ຕະຫຼາດຫຼັກຊັບລາວ ເພື່ອແຈ້ງລົງທະບຽນເຂົ້າຮ່ວມກອງປະຊຸມ.

ຫວັງຢ່າງຍິ່ງວ່າ ທ່ານຄົງສະຫຼະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ.

ປະທານສະພາບໍລິຫານ ບໍລິສັດ LCC

ຢາງ ຊຸນຢົງ

ກອງປະຊຸມວິສາມັນຜູ້ຖືຮຸ້ນປະຈຳປີ 2020

ຂອງ ບໍລິສັດ ຊີມັງລາວ ມະຫາຊົນ

ເອກະສານຄັດຕິດ :

1. ວາລະກອງປະຊຸມວິສາມັນຜູ້ຖືຮຸ້ນ ບຊລ ປີ 2020
2. ແຜນການປະກອບຮຸ້ນ ແລະຟື້ນຟູບໍລິສັດ
3. ແບບຟອມໃບມອບສິດ.
4. ແຜນທີ່ຕັ້ງຂອງກອງປະຊຸມວິສາມັນຜູ້ຖືຮຸ້ນປະຈຳປີ 2020

ໝາຍເຫດ :

1. ຜູ້ຖືຮຸ້ນທຸກໆທ່ານຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆເລີ່ມແຕ່ວັນທີ 04/12/2020 ຢູ່ຕະຫຼາດຫຼັກຊັບ ຊັ້ນ 4, ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ ບ້ານໂພນທັນ ເໜືອ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫລວງວຽງຈັນ ໂທລະສັບ (856-21) 454361, ແຟັກ (856-21) 454361-4.
2. ສຳລັບຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມດວ້ຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ.
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະລົງລາຍເຊັນໃນໃບມອບສັນທະຕາມ <u>ເອກະສານຄັດຕິດ 3</u> ທີ່ໄດ້ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ.
4. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມກອງປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນນີ້ ແລະສົ່ງມອບໃຫ້ປະທານກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້,
5. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ຜູ້ອຳນວຍການ ຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະລົງລາຍເຊັນໃນໃບມອບສັນທະ ແລະໝາຍ (✓) ເພື່ອເລືອກເອົາຜູ້ອຳນວຍການ ຂອງບໍລິສັດທ່ານໃດທ່ານໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສັນທະດັ່ງກ່າວ ພ້ອມເອກະສານປະກອບສົ່ງເຖິງ ບໍລິສັດ ຊີມັງລາວ ມະຫາຊົນ ຊັ້ນ 1, ພະແນກເລຂານຸການ ບໍລິສັດ, ບ້ານ ໂພນພະເນົາ, ຮ່ອມ 3 ເມືອງໄຊເສດຖາ ນະຄອນຫລວງວຽງຈັນ ສປປລາວ, ຕູ້ ປ.ນ 6821 ແລະກະລຸນາສົ່ງເຖິງບໍລິສັດ ກ່ອນວັນທີ 28/12/2020.
6. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄຳຖາມກ່ຽວກັບການມອບສັນທະ, ກະລຸນາສອບຖາມ ທ່ານ ສົມທະນູ ສົມຟອງບຸດຕະຂັນ (856-20) 22225166 ແລະ ທ່ານ ຈ້າວ ປິ່ງປົ່ນ (856-20) 56011786 ໃນໂມງລັດຖະການ.

<u>ຄຳແນະນຳກ່ຽວກັບການລົງຄະແນນສຽງ</u>

1. ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບບັດລົງຄະແນນສຽງໃນທຸກໆວາລະ ທີ່ຕ້ອງການໃຫ້ມີການລົງຄະແນນສຽງ ໃນເວລາລົງທະບຽນເຂົ້າຮ່ວມກອງປະຊຸມ. ການລົງຄະແນນສຽງໂດຍຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນເປັນຜູ້

ມອບໝາຍສິດໄດ້ລະບຸຢ່າງຈະແຈ້ງແລ້ວກ່ຽວກັບການລົງຄະແນນໃນແຕ່ລະວາລະ ບໍລິສັດ ຊີມັງລາວ ມະຫາຊົນຈະບັນທຶກການລົງຄະແນນສຽງໃນເວລາລົງທະບຽນ ໂດຍທີ່ຜູ້ຕາງໜ້າຈະບໍ່ຕ້ອງລົງຄະແນນສຽງອີກ

2. ກອງປະຊຸມ ຈະເຊີນພຽງແຕ່ຜູ້ຖືຮຸ້ນທ່ານໃດທີ່ ບໍ່ເຫັນດີ ຕໍ່ບັນຫາທີ່ກອງປະຊຸມໄດ້ນຳສະເໜີເທົ່ານັ້ນ ລົງຄະແນນສຽງ (ໝາຍຄວາມວ່າຜູ້ຖືຮຸ້ນທ່ານໃດທີ່ເຫັນດີຕໍ່ການແຕ່ງຕັ້ງດັ່ງກ່າວ ກໍ່ບໍ່ຈຳເປັນຕ້ອງລົງຄະແນນສຽງໃດໆ).
3. ໃນການລົງຄະແນນສຽງຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້, ໃນນັ້ນ ຕ້ອງລະບຸຢ່າງຈະແຈ້ງກ່ຽວກັບຊື່ ແລະ ນາມສະກຸນຂອງທ່ານ, ຈຳນວນຮຸ້ນຂອງ ບໍລິສັດ ຊີມັງລາວ ມະຫາຊົນ ທີ່ທ່ານຖືຢູ່ ແລະໃຫ້ໝາຍຕີນກາໃສ່ຫ້ອງບໍ່ເຫັນດີ.
4. ຫຼັງຈາກປະກອບຂໍ້ມູນຮຽບຮ້ອຍແລ້ວ ຂໍໃຫ້ທ່ານຍົກບັດດັ່ງກ່າວຂຶ້ນ ເພື່ອໃຫ້ຄະນະຮັບຜິດຊອບເກັບເອົາ ແລະຮວບລວມຄະແນນສຽງ.
5. ທ່ານຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍໂດຍການນັບຄະແນນສຽງຈະຖືເອົາໜຶ່ງຮຸ້ນເທົ່າກັບໜຶ່ງຄະແນນສຽງ.
6. ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດກໍ່ຕໍ່ເມື່ອມີຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງ ຈຳນວນຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ ທັງໃນທີ່ປະຊຸມ ດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 143 ຂອງກົດໝາຍວ່າດ້ວຍວິສາຫະກິດ.

ເອກະສານຄັດຕິດ: 01

ວາລະຂອງກອງປະຊຸມ

ວິສາມັນຜູ້ຖືຮຸ້ນ ບຊລ ປະຈຳປີ 2020

ສະເໜີໃຫ້ກອງປະຊຸມພິຈາລະນາ ແລະຮັບຮອງ

- ເວລາຈັດກອງປະຊຸມວິສາມັນຜູ້ຖືຮຸ້ນ ແມ່ນວັນທີ 28/12/2020 ເວລາ 14.00 ໂມງ
- ສະຖານທີ່ : ຫ້ອງປະຊຸມຊັ້ນ 8 ຂອງອາຄານຕະຫຼາດຫຼັກຊັບລາວ
- ປະທານກອງປະຊຸມ : ທ່ານ ຈ່າງລີ (ຜູ້ອຳນວຍການ ບໍລິສັດ)
- ປະທານກອງປະຊຸມເລີ່ມເປີດກອງປະຊຸມຢ່າງເປັນທາງການ
  - ແນະນຳແຂກ ແລະຜູ້ເຂົ້າຮ່ວມ
- ເລຂາສະພາບໍລິຫານແນະນຳວິທີການລົງຄະແນນສຽງ ແລະວິທີການນັບຄະແນນສຽງ
- ພິຈາລະນາ ແລະຮັບຮອງແຜນການປະກອບຮຸ້ນ ແລະຟື້ນຟູທຸລະກິດຂອງບໍລິສັດ
- ທ່ານຜູ້ຖືຮຸ້ນຕັ້ງຄຳຖາມ ແລະປະກອບຄຳຄິດເຫັນ
- ການລົງຄະແນນສຽງ
- ການນັບຄະແນນສຽງ
- ການແຈ້ງຜົນນັບຄະແນນສຽງ
- ລົງລາຍເຊັນ,ແຈ້ງມະຕິຜູ້ຖືຮຸ້ນ ແລະບົດບັນທຶກກອງປະຊຸມ
- ປິດກອງປະຊຸມ

ເອກະສານຄັດຕິດ: 02

ແຜນປະກອບຮຸ້ນ ແລະຟື້ນຟູຂອງບໍລິສັດ ຊິມັງລາວ ມະຫາຊົນ

ປີ 2020 ເນື່ອງຈາກວ່າມີຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ແລະມີຄວາມຫຍຸ້ງຍາກທາງດ້ານການດຳເນີນທຸລະກິດ ບໍລິສັດ ຊິມັງລາວ ມະຫາຊົນ ໄດ້ຢຸດການຜະລິດນັບແຕ່ເດືອນ 4/2020 ມາຮອດປະຈຸບັນນີ້. ອີງຕາມບົດບັນທຶກກອງປະຊຸມຄັ້ງວັນທີ 15/10/2020 ທີ່ຈັດຂຶ້ນຢູ່ຕະຫຼາດຫຼັກຊັບລາວ ໂດຍມີຫຼາຍພາກສ່ວນເຂົ້າຮ່ວມ ເພື່ອສະໜັບສະໜູນ ແລະຊ່ວຍບໍລິສັດ ຊິມັງລາວ ມະຫາຊົນ ໃຫ້ສາມາດປະກອບຮຸ້ນ ຫຼືຟື້ນຟູການດຳເນີນທຸລະກິດ ແລະເພື່ອປ້ອງກັນຄວາມສ່ຽງທີ່ຈະຖອກຖອນອອກຈາກຕະຫຼາດຫຼັກຊັບລາວ ສະນັ້ນ,ຈຶ່ງລາຍງານແຜນການປະກອບຮຸ້ນ ແລະຟື້ນຟູຂອງບໍລິສັດ ຊິມັງລາວ ມະຫາຊົນມີ ລາຍລະອຽດດັ່ງລຸ່ມນີ້ :

I. ສະພາບລວມຂອງບໍລິສັດ

1. ສະພາບການລົງທຶນ ແລະຖືຮຸ້ນ : ບໍລິສັດ ຊິມັງລາວ ມະຫາຊົນ (ຊື່ເດີມແມ່ນບໍລິສັດ ຊິມັງລາວ ຈຳກັດຕໍ່ໄປນີ້ມີຊື່ຫຍໍ້ເອີ້ນວ່າ : ບໍລິສັດ ຊິມັງລາວ), ຈົດທະບຽນ ແລະກໍ່ສ້າງໃນປີ 1998 ເປັນບໍລິສັດຮ່ວມທຶນລະຫວ່າງ ບໍລິສັດ ການຮ່ວມມືເຕັກນິກ ເສດຖະກິດ ສາກົນຢູນນານ ສປຈີນ ຈຳກັດຕໍ່ໄປນີ້ເອີ້ນວ່າ : ບໍລິສັດ ສາກົນຢູນນານ ກັບລັດວິສາຫະກິດ ພັດທະນາກະສິກຳ ອຸດສາຫະກຳ ແລະບໍລິການຂາເຂົ້າ-ຂາອອກ (ທີ່ຂຶ້ນກັບກະຊວງປ້ອງກັນປະເທດ) ຕໍ່ໄປນີ້ເອີ້ນວ່າ : ລັດວິສາຫະກິດ ພກອ, ໃນການກໍ່ສ້າງເບື້ອງຕົ້ນ ອັດຕາສ່ວນການຖືຮຸ້ນແມ່ນ ຝ່າຍຈີນຖືຮຸ້ນ 60% ແລະຝ່າຍລາວຖືຮຸ້ນ 40%, ເດືອນ 03/2002 ບໍລິສັດ ຊິມັງລາວ ນຳໃຊ້ເງິນກູ້ແບບຜ່ອນຜັນຂອງລັດຖະບານຈີນເປັນຈຳນວນ 200 ລ້ານຢວນ ຈຶ່ງເຮັດໃຫ້ໂຮງງານຊິມັງອັງວຽງຫລັງ 2 ກໍ່ສ້າງສຳເລັດ ແລະເລີ່ມດຳເນີນການຜະລິດ ໃນເດືອນ 3/2002, ການອອກແບບກຳລັງການຜະລິດແມ່ນ 200,000ໂຕນ/ປີ, ເປັນສາຍການຜະລິດລະບົບເຕົາແຫ້ງທຳອິດ ຂອງ ສປປລາວ,ວັນທີ 1/1/2013 ໄດ້ເຊັນສັນຍາດັດແກ້ເພີ່ມເຕີມຂອງບໍລິສັດ ຊິມັງລາວ ຈຳກັດ ກັບລັດຖະບານລາວ ລະຫວ່າງບໍລິສັດ ສາກົນຢູນນານ ກັບລັດວິສາຫະກິດ ພກອ ອັດຕາສ່ວນຂອງບໍລິສັດ ຊິມັງລາວ ມີການປ່ຽນແປງເຊັ່ນ : ບໍລິສັດ ສາກົນຢູນນານ ຖືຮຸ້ນ 51% ແລະ ລັດວິສາຫະກິດ ພກອ ຖືຮຸ້ນ 49%. ເດືອນ 03/2018 ບໍລິສັດ ຊິມັງລາວ ໄດ້ຈົດທະບຽນຢູ່ຕະຫຼາດຫຼັກຊັບ ໂດຍໄດ້ປ່ຽນຊື່ເປັນ ບໍລິສັດ ຊິມັງລາວ ມະຫາຊົນ ຫລັງຈາກເຂົ້າຕະຫຼາດຫຼັກຊັບລາວ ອັດຕາສ່ວນການຖືຫຸ້ນມີການປ່ຽນແປງຄື : ບໍລິສັດຢູນນານສາກົນ ຖືຮຸ້ນ 35,69% ແລະລັດວິສາຫະກິດ ພກອ ຖືຮຸ້ນ 34,29 %, ບໍລິສັດຫຼັກຊັບລາວ ຈີນ ຈຳກັດ ຖືຮຸ້ນ 18,86%, ມະຫາຊົນ 11,16%.
2. ສະພາບກົນໄກຈັດຕັ້ງ ແລະພະນັກງານ : ຮອດວັນທີ 30/9/2020 ບໍລິສັດ ມີພະນັກງານຢູ່ໃນບັນຊີລາຍຊື່ຈຳນວນ 273 ຄົນ ໃນນັ້ນ,ພະນັກງານຄົນຈີນ ຈຳນວນ 6 ຄົນ ແລະພະນັກງານຄົນລາວ ຈຳນວນ 267 ຄົນ, ມາຮອດປະຈຸບັນນີ້ຮັກສາໄວ້ຈຳນວນ 30 ຄົນມາປະຈຳການເພື່ອດຳເນີນວຽກງານຕ່າງໆ ສ່ວນພະນັກງານທີ່ເຫຼືອແມ່ນໄດ້ຢຸດການເຮັດວຽກ ຫຼືໄດ້ສະເໜີລາອອກຈາກການຈັດຕັ້ງ ລໍຖ້າການຈັດສັນຢ່າງເປັນເອກະພາບກັນ.
3. ສະພາບໜີ້ສິນ ແລະຊັບສິນ :

   ຮອດວັນທີ 30 / 6 / 2020 ບໍລິສັດມີຊັບສິນທັ້ງໝົດເປັນຈຳນວນ 11,480,000 ໂດລາ ໃນນັ້ນຊັບສິນທີ່ບໍ່ໝຸນວຽນມີຈຳນວນ 2,970,000 ໂດລາ, ໜີ້ຕ້ອງຮັບມີຈຳນວນ 4,530,000 ໂດລາ,ເຄື່ອງໃນສາງ ຈຳນວນ 3,120,000 ໂດລາ,ຊັບສິນອື່ນໆທີ່ໝຸນວຽນຈຳນວນ 860,000 ໂດລາ,ໜີ້ຕ້ອງຮັບທັ້ງໝົດຈຳນວນ 5,270,000 ໂດລາ, ເງິນກູ້ທະນາຄານໄລຍະສັ້ນ ຈຳນວນ 1,100,000 ໂດລາ, ໜີ້ຕ້ອງສົ່ງຈຳນວນ

1,480,000 ໂດລາ, ໜີ້ຕ້ອງສົ່ງອື່ນໆຈຳນວນ 2,690,000 ໂດລາ, ທຶນເຈົ້າຂອງທຸລະກິດຈຳນວນ 6,210,000 ໂດລາ.

4. ສະພາບການຜະລິດ ແລະການດຳເນີນທຸລະກິດ : ໂຮງງານຊີມັງວັງວຽງຫລັງ 2 (ບໍລິສັດ ຊີມັງລາວມະຫາຊົນ) ແມ່ນໄດ້ນຳໃຊ້ຫີນປູນແບບຄົບຊຸດເປັນວັດຊຸ້ຖ່ານຫີນທີ່ບໍ່ມີຄວັນ ຈາກພາກສ່ວນທາງນອກເປັນເຊື້ອເຟີງ ການນຳໃຊ້ເຕັກນິກເຕົາປັ່ນ, ການຜະລິດຊີມັງ ແລະກະລິງເກົ່ 700 ໂຕນ/ວັນ.ຄວາມສາມາດໃນການຜະລິດຊີມັງແມ່ນ 200,000 ໂຕນ/ປີ ປະຈຸບັນນີ້ຜະລິດຕະພັນຕົ້ນຕໍຂອງພວກເຮົາແມ່ນຊີມັງປອດແລນກາກະທິງທອງ ປະເພດ I ໂດຍນຳໃຊ້ມາດຕະຖານ ASTM ຂອງອາເມລິກາ ແລະຜະລິດຕະພັນຕົ້ນຕໍແມ່ນນຳໃຊ້ມາດຕະຖານຊີມັງລາວ, ສປຈີນ GB ແລະ ມາດຕະຖານ ASTM ຂອງອາເມລິກາ.

ນັບແຕ່ການກໍ່ສ້າງໂຮງງານຊີມັງວັງວຽງ ຫລັງ 2 ມາຮອດປະຈຸບັນນີ້ ຄູ່ຮ່ວມມືທັງສອງຝ່າຍລາວ-ຈີນ ໄດ້ຮ່ວມມືກັນດ້ວຍດີມາຕະຫຼອດ ຜະລິດຕະພັນຂອງພວກເຮົາແມ່ນມີຄຸນນະພາບດີ ແລະບໍລິສັດກໍ່ໄດ້ເອົາໃຈໃສ່ເລື່ອງການຮັກສາສິ່ງແວດລ້ອມ ແລະໄດ້ຮັບພາລະບົດບາດຕໍ່ສັງຄົມຢ່າງຕັ້ງໜ້າ ຜະລິດຕະພັນກາກະທິງທອງເປັນຍີ່ຫໍ້ທີ່ໜຶ່ງຢູ່ໃນທ້ອງຕະຫຼາດຊີມັງລາວ. ບໍລິສັດຊີມັງລາວແມ່ນເປັນບໍລິສັດທຳອິດທີ່ໄດ້ຮັບຮອງມາດຕະຖານສາກົນ ISO 2001 : 2015 ຢູ່ໃນວົງຈອນການຜະລິດຊີມັງ, ຊີມັງກາກະທອງນຳໃຊ້ເຂົ້າໃນການກໍ່ສ້າງຕຶກອາຄານ ຫ້ອງວ່າການນາຍົກລັດຖະມົນຕີ,ຫໍປະຊຸມແຫ່ງຊາດ, ສະໜາມກິລາແຫ່ງຊາດ,ຖະໜົນລ້ານຊ້າງ,ໂຮງແຮມດອນຈັນ, ຂົວຫີນເຫີບ, ເຂື່ອນໄຟຟ້າ ແລະໂຄງການຂະໜາດໃຫ່ຍ ແລະມີສັນຍາລັກອື່ນໆ. ນອກນັ້ນພວກເຮົາຍັງໄດ້ຖືກເລືອກເປັນຜູ້ສະໜອງໃຫ່ຍທີ່ສຸດໃນໂຄງການລົດໄຟລາວ ຈີນ ແລະໂຄງການເສັ້ນທາງດ່ວນວຽງຈັນ-ວັງວຽງຢູ່ໃນ ສປປລາວ. ກ່ອນປີ 2019 ບໍລິສັດ ຊີມັງລາວ ຮັກສາຖານະມີກຳໄລຢ່າງຕໍ່ເນື່ອງ ສະພາບເສດຖະກິດດີ ແລະມີສື່ສຽງທາງດ້ານສັງຄົມ. ບໍລິສັດໄດ້ຮັບພາລະຕໍ່ສັງຄົມຢ່າງຕັ້ງໜ້າເຊັ່ນ : ເສຍອາກອນ,ເພີ່ມໂອກາດໃນການເຮັດວຽກຊ່ວຍເຫຼືອອົງການຈັດຕັ້ງຂອງມະຫາຊົນ,ຮັກສາສາຍສຳພັນທີ່ດີກັບກອງທັບ,ຊ່ວຍເຫຼືອບັນດາໂຮງຮຽນ ແລະໂຮງໝໍ, ສ້ອມແປງຂົວທາງ ແລະອື່ນໆ. ຫຼາຍປີຜ່ານມາບໍລິສັດໄດ້ຮັບການຍ້ອງຍໍຈາກລັດຖະບານລາວ-ຈີນ ແລະໄດ້ຮັບເປັນຮູບແບບການຮ່ວມມືທາງດ້ານເຕັກນິກ ເສດຖະກິດ ລະຫວ່າງລາວ-ຈີນ.

ຫຼັງຈາກປີ 2002 ບໍລິສັດ ໄດ້ກໍ່ສ້າງສຳເລັດ ແລະເລີ່ມການຜະລິດ ບໍລິສັດໄດ້ສົ່ງເງິນກູ້ການກໍ່ສ້າງໃຫ້ທະນາຄານຕາມເວລາທີ່ກຳນົດໄວ້ ແລະສຳເລັດ ປີ 2002-2019 ຜະລິດ ແລະຈຳໜ່າຍຊີມັງທັງໝົດຈຳນວນ4,148,200 ໂຕນ ແລະສ້າງລາຍຮັບຈາກການຈຳໜ່າຍຊີມັງໄດ້ທັງໝົດຈຳນວນ 286,000,000 ໂດລາ,ສ້າງກຳໄລເປັນຈຳນວນ 15,610,000 ໂດລາ ແລະ ເສຍອາກອນທັງໝົດໃນແຕ່ລະປີຈຳນວນ 22,730,000 ໂດລາ.

II. ຄວາມຫຍຸ້ງຍາກ ແລະບັນຫາທີ່ປະເຊີນ

ໃນປີ 2019 ເນື່ອງຈາກວ່າລາຄາຊີມັງໃນທ້ອງຕະຫຼາດໄດ້ຕ່ຳກວ່າຕົ້ນທຶນການຜະລິດໝົດປີ 2019 ບໍລິສັດໄດ້ຂາດທຶນຈຳນວນ 16,572,100 ຢວນ ເທົ່າກັບ 2,530,000 ໂດລາ, ປີ 2020 ເນື່ອງຈາກການລະບາດຂອງພະຍາດໂຄວິດ-19 ແລະ ມີຫຍຸ້ງຍາກທາງດ້ານການດຳເນີນທຸລະກິດ ນັບແຕ່ເດືອນ 4/2020 ມາຮອດປະຈຸບັນນີ້ແມ່ນໄດ້ຢຸດການຜະລິດມາໂດຍຕະຫຼອດສາເຫດຕົ້ນຕໍມີດັ່ງລຸ່ມນີ້ :

1. ເນື່ອງຈາກວ່າມີຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ອີງຕາມຄຳສັ່ງເລກທີ 06/ສນຍ, ລົງວັນທີ 29/3/2020 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ ແລະກັນການລະບາດເພື່ອຕ້ານພະຍາດໂຄວິດ-19 ນັບແຕ່ວັນທີ 1/4/2020 ເປັນຕົ້ນມາຮອດປະຈຸບັນນີ້ ບໍລິສັດ ຊີມັງລາວ ໄດ້ຢຸດການຜະ

ລິດຕະຫຼອດ,ຍ້ອນວ່າຜົນກະທົບທາງລົບຈາກໂຄວິດ-19ເຮັດໃຫ້ໂຄງການຕ່າງໆທີ່ລົງທຶນຢູ່ໃນ ສປປລາວ ຫຼຸດລົງຢ່າງໜັກໜ່ວງ, ເດືອນ 4-7/2020 ເນື່ອງຈາກວ່າມີຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ປະລິມານການຈາໜ່າຍຊີມັງຫຼຸດລົງປະມານ 60,000 ໂຕນ, ລາຍຮັບຈາກການຈາໜ່າຍຊີມັງຫຼຸດລົງປະມານ 3,220,000 ໂດລາ ເຮັດໃຫ້ 6 ເດືອນຕົ້ນປີ 2020 ສືບຕໍ່ຂາດທຶນ.

2. ຜະລິດຕະພັນຊີມັງລົ້ນຕະຫຼາດບັນດາໂຮງງານແຕ່ລະແຫ່ງຫຼຸດລາຄາລົງເພື່ອແຂ່ງຂັນການຂາຍເຮັດໃຫ້ລາຄາຊີມັງຫຼຸດລົງຢ່າງຕໍ່ເນື່ອງ, ບັນດາທຸລະກິດຊີມັງຫຼາຍແຫ່ງມີການຂາດທຶນ, ພ້ອມກັນນັ້ນເນື່ອງຈາກວ່າຜະລິດຕະພັນຊີມັງໃຫ້ທ້ອງຕະຫຼາດແມ່ນຂຶ້ນກັບຜູ້ຊື້ ແລະລູກຄ້າແກ່ຍາວການຊຳລະສະສາງຄ່າຊີມັງເຮັດໃຫ້ໜີ້ຕ້ອງຮັບບໍ່ສາມາດເກັບຄືນໄດ້ທັນເວລາ ເຮັດໃຫ້ບໍລິສັດຂາດເງິນທຶນສືບຕໍ່ການຜະລິດ.
3. ກຳລັງການຜະລິດ ຂອງພວກເຮົາແມ່ນ 200,000 ໂຕນຕໍ່ໄປ ໂດຍຜ່ານການນຳໃຊ້ເປັນໄລຍະເວລາກວ່າ 20 ປີ, ເຮັດໃຫ້ເຕັກນິກ ແລະເຄື່ອງກົນຈັກຕ່າງໆເກົ່າແກ່ຫຼ້າຫລັງ, ຄວາມສາມາດໃນການຜະລິດໜ້ອຍແຕ່ຄ່າສິ້ນເປືອງສູງ, ຈຳນວນພະນັກງານຫຼາຍ ແລະມີພາລະຕໍ່ພະນັກງານໜັກໜ່ວງ, ຕົ້ນທຶນບຳລຸງຮັກສາການສ້ອມແປງແຕ່ລະປີມີການເພີ່ມຂຶ້ນ ພາໃຫ້ຕົ້ນທຶນການຜະລິດສູງ ແລະພົບຄວາມຫຍຸ້ງຍາກທາງດ້ານການດຳເນີນທຸລະກິດ.

III. ທ່າແຮງ ແລະຊັບພະຍາກອນທີ່ມີຢູ່ໃນປະຈຸບັນນີ້

ເຖິງແມ່ນວ່າປະຈຸບັນນີ້ບໍລິສັດໄດ້ພົບເຈີຄວາມຫຍຸ້ງຍາກ ແຕ່ຍັງມີທ່າແຮງໃນຊັບພະຍາກອນຈຳນວນໜຶ່ງທີ່ສາມາດຂຸດຄົ້ນ ແລະຂະຫຍາຍເພື່ອຊ່ວຍບໍລິສັດຊອກຫາທິດທາງອານາຄົດຂອງບໍລິສັດ.

1. ຜູ້ຖືຮຸ້ນເກົ່າແມ່ນເຫັນດີໂອນຮຸ້ນທີ່ຖືຢູ່ : ຜູ້ຖືຮຸ້ນລາຍໃຫ່ຍຂອງບໍລິສັດຄື : ຜູ້ຖືຮຸ້ນອັນດັບທີ່ໜຶ່ງ ບໍລິສັດຢຸນນານສາກົນ,ຜູ້ຖືຮຸ້ນອັນດັບທີ່ສອງ ລັດວິສາຫະກິດ ພກອ ແລະຜູ້ຖືຮຸ້ນອັບດັບທີ່ສາມບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ. ປະຈຸບັນນີ້ບໍລິສັດຢຸນນານສາກົນກັບບໍລິສັດຫຼັກຊັບລາວ - ຈີນເຫັນດີໂອນຮຸ້ນທີ່ມີຢູ່, ສ່ວນລັດວິສາຫະກິດ ພກອ ແມ່ນສືບຕໍ່ຮັກສາຮຸ້ນທີ່ມີຢູ່,ຖ້າສາມາດດຶງດູດນັກລົງທຶນມາຊື້ຮຸ້ນຈະສາມາດຮ່ວມມືກັບຜູ້ຖືຮຸ້ນທີ່ຍັງເຫຼືອເພື່ອດຳເນີນການພັດທະນາບໍລິສັດແບບຍຸດທະສາດເປັນໄລຍະຍາວ.
2. ມີຄຸນຄ່າບໍ່ມຊ້ອນໃນຖານະເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ສາມາດເພີ່ມປະສິດທິພາບ ແລະຂະຫຍາຍຮຸ້ນໂດຍຜ່ານຕະຫຼາດຫຼັກຊັບ,ຜ່ານການລະດົມທຶນຫຼາຍເທື່ອສາມາດສະໜັບສະໜຸນບໍລິສັດ ພັດທະນາ ແລະຂະຫຍາຍຕົວຢູ່ໃນສປປລາວໄດ້.
3. ມີຄຸນຄ່າໃນການຂຸດຄົ້ນຊັບພະຍາກອນ. ບໍລິສັດມີບໍ່ແຮ່, ຫີນປູນຢູ່ເຂດວັງວຽງປະມານຈຳນວນ 40 ລ້ານໂຕນ ແລະໄດ້ສ້າງສາຍການຜະລິດຫີນຂົບແລ້ວ ແລະເລີ່ມສະໜອງຫີນປູນໄປສູ່ໂຄງການທາງລົດໄຟລາວ-ຈີນ ແລະໂຄງການອື່ນທີ່ອ້ອມຂ້າງ ນອກຈາກນີ້,ຢູ່ແຂວງວຽງຈັນຍັງມີບໍ່ຖ່ານຫີນບໍ່ໜຶ່ງທີ່ມີສິດທິການສຳຫຼວດເນື້ອທີ 20 km^2 ແຕ່ຍັງບໍ່ທັນຮູ້ປະລິມານສະສົມມີເທົ່າໃດ, ປະຈຸບັນນີ້ແມ່ນໄດ້ສຳເລັດວຽກການຊີເຈາະໃນເບື້ອງຕົ້ນ, ກຳລັງສະເໜີຕໍ່ລັດຖະບານລາວ ແລະພາກສ່ວນທີ່ກ່ຽວຂ້ອງ ເພື່ອປະເມີນ ແລະກວດກາບົດລາຍງານປະລິມານສະສົມ,ປະຈຸບັນນີ້ຢູ່ໃນເຂດວຽງຈັນຂາດແຄນວ້ນຖ່ານຫີນ ໂຮງງານຊີມັງຂະໜາດໃຫ່ຍ ແລະໂຮງງານລ້າງຖ່ານລ້ວນແຕ່ຕ້ອງການຖ່ານຫີນເປັນຈຳນວນຫຼວງຫຼາຍຖ້າວ່າ ສາມາດຂຸດຄົ້ນຖ່ານຫີນມາໄດ້, ຖ່ານຫີນທີ່ມີຄວາມຮ້ອນສູງສາມາດຂາຍໃຫ້ໂຮງງານຊີມັງແລະຖ່ານຫີນຄວາມຮ້ອນຕ່ຳສາມາດ

ຂາຍໃຫ້ໂຮງງານລ້າງຖ່ານຈະເກີດຜົນປະໂຫຍດຢ່າງທັນທີ່ໃນອະນາຄົດ ບໍລິສັດສາມາດປ່ຽນຂະແໜງໃໝ່ ຄື : ຖືການຂຸດຄົ້ນຊັບພະຍາກອນບໍ່ແຮ່ເພີ່ມເປັນອີກຂະແໜງໜຶ່ງ.

4. ມີຄຸນຄ່າທາງດ້ານຍີ່ຫໍ້ : ຊີມັງຍີ່ຫໍ້ກາກະທິງທອງຂອງບໍລິສັດ ເປັນຍີ່ຫໍ້ລະດັບທີ່ໜຶ່ງໃນວົງຈອນ ຜະລິດຊີມັງຢູ່ໃນທ້ອງຕະຫຼາດ ສປປລາວ,ມີຊື່ສຽງດັ່ງແລະນິຍົມໃຊ້ໃນໂຄງການຂອງຈີນ ແລະໂຄງການກໍ່ສ້າງຂະໜາດໃຫ່ຍໆ ແລະຜູ້ຊົມໃຫ່ຍຄົນລາວແຕ່ລາຄາຊີມັງກາກະທິງທອງກໍ່ເປັນລາຄາສູງສຸດທີ່ຢູ່ໃນຕະຫຼາດຊີມັງ ໃນ ສປປລາວ, ຜູ້ດຳເນີນຕໍ່ໄປສາມາດຊອກຫາທ່າແຮງທາງດ້ານຍີ່ຫໍ້ຢ່າງໂດຍໄວ ຫຼືສືບຕໍ່ຜະລິດ ແລະຈຳໜ່າຍວັດສະດຸກໍ່ສ້າງຊີມັງຫຼືນຳໃຊ້ຊື່ສຽງຂອງກາກະທິງທອງ ເພື່ອຂະຫຍາຍແລະພັດທະນາເປັນຂະແໜງອື່ນໆ.
5. ທ່າແຮງທາງດ້ານທີ່ຕັ້ງພູມສາດ:ໂຮງງານຊີມັງວັງວຽງ ຫຼັງ 2 ຕິດກັບເສັ້ນທາງເລກທີ 13 ແລະໃກ້ໆກັບເຂດທ່ອງທຽວວັງວຽງ ທີ່ມີຊື່ສຽງໂດດດັ່ງ,ເນື້ອທີ່ໂຮງງານກວ້າງຂວ,ເນື້ອທີ່ດິນສາມາດທີ່ນຳໃຊ້ໄດ້ 58,052 ເຮັກຕາ, ມີທິວທັດສວຍງາມ, ມີຕົ້ນໄມ້ສີຂຽວ, ຮົ່ມເຢັນ, ຢູ່ທາງດ້ານໜ້າມີຫ້ວຍ ແລະໜອງ ແລະທາງເບື້ອງຫຼັງມີພູຜາ ແລະເປັນໂຮງງານທີ່ມີສະພາບແວດລ້ອມທີ່ດີ, ຫຼັງຈາກການກໍ່ສ້າງທາງລົດໄຟລາວ-ຈີນ ສຳເລັດແລ້ວໃນປີ 2021 ເຂດວັງວຽງ ຈະເປັນຈຸດສູນກາງຂອງເສັ້ນທາງລົດໄຟ ແລະເສັ້ນທາງດ່ວນ ໃນຕໍ່ໜ້າຈະກາຍເປັນສູນທ່ອງທຽວ, ສະມາຄົມຂົນສົ່ງຢູ່ໃນ ສປປລາວ ຢ່າງໂດຍໄວ, ທ່າແຮງທີ່ຕັ້ງຂອງໂຮງງານຊີມັງວັງວຽງ ຫລັງ 2 ໃນຕໍ່ໜ້າຈະເໝາະສົມພັດທະນາເປັນຂະແໜງທ່ອງທຽວ ແລະວັດທະນາທຳ ທີ່ມີຈຸດພິເສດ.

IV. ແຜນການປະກອບຮຸ້ນ ແລະຟື້ນຟູທຸລະກິດ

ຄະນະອຳນວຍການ ຂອງບໍລິສັດ ໄດ້ປຶກສາຫາລືກັບກຳມະການສະພາບໍລິຫານ ແລະຜູ້ຖືຮຸ້ນແຕ່ລະຝ່າຍ,ຜ່ານການພະຍາຍາມ ປະຈຸບັນນີ້ໄດ້ສ້າງແຜນປະກອບຮຸ້ນ ແລະ ຟື້ນຟູທຸລະກິດໃນຕໍ່ໜ້າມີລາຍລະອຽດດັ່ງລຸ່ມນີ້ :

1. ໄລຍະສັ້ນ : ແມ່ນສະສາງໜີ້ຕ້ອງຮັບ ແລະໜີ້ຕ້ອງສົ່ງໃຫ້ໄດ້ໂດຍໄວ ຈັດສັນພະນັກງານໃຫ້ດີ, ຫຼຸດຜ່ອນພາລະຂອງບໍລິສັດທີ່ມີຢູ່ໃນປະຈຸບັນນີ້.
    1) ພາຍຫລັງບໍລິສັດໄດ້ຢຸດຕິການຜະລິດວຽກງານຕົ້ນຕໍກໍ່ແມ່ນວຽກການເກັບໜີ້ສິນມາໃຫ້ທັນເວລາ ເພື່ອນຳໃຊ້ເງິນທຶນດັ່ງກ່າວມາແກ້ໄຂຈ່າຍເງິນອຸດໜູນອອກການຂອງພະນັກງານ, ສົ່ງເງິນກູ້ໃຫ້ທະນາຄານ, ແກ້ໄຂບັນຫາໜີ້ສິນຕ່າງໆແລະຮັກສາພະນັກງານຈຳນວນ 30 ຄົນເພື່ອສືບຕໍ່ເຮັດວຽກແລະເພື່ອສະກັດກັ້ນບໍ່ໃຫ້ເກີດຄວາມສ່ຽງການຮ້ອງຟ້ອງ ທາງດ້ານການຈັດສັນພະນັກງານ ຫຼືບັນຫາໜີ້ສິນດັ່ງກ່າວ.
    2) ສືບຕໍ່ຮັກສາສິດທິສຳປະທານບໍ່ແຮ່ວັດຖຸດິບຕ່າງໆລວມທັງບໍ່ຖ່ານຫີນ,ສືບຕໍ່ສັນຍາການຂຸດຄົ້ນຫຼືສຳຫຼວດ ແລະສືບຕໍ່ດຳເນີນສາຍປຸງແຕ່ງຫີນປູນ.
    3) ຮັກສາສະຖານະບໍລິສັດຈົດທະບຽນ,ເປີດກອງປະຊຸມສະພາບໍລິຫານ,ກອງປະຊຸມຜູ້ຖືຮຸ້ນແລະເປີດເຜີຍຂໍ້ມູນຕາມລະບຽບການ.

4) ຊອກຫາຜູ້ລົງທຶນໃໝ່,ສຶກສາຂໍ້ມູນຂອງຜູ້ລົງທຶນໃໝ່ພ້ອມລາຍງານ ແລະເຈລະຈາກັບຜູ້ຖືຮຸ້ນແຕ່ລະຝ່າຍແລະພາກສ່ວນທີ່ກ່ຽວຂ້ອງຂອງລັດຖະບານ.

2. ໄລຍະກາງ ແລະໄລຍະຍາວ: ແມ່ນຊອກຫາຜູ້ລົງທຶນ ຫຼືຄູ່ຮ່ວມມືມາຈັດຊື້ຮຸ້ນ ເພື່ອດຳເນີນການປະກອບຮຸ້ນ ຫຼືວ່າເອົາວິທີອື່ນໆເພື່ອສູ້ຊົນຟື້ນຟູການຜະລິດ ແລະດຳເນີນທຸລະກິດ.

1) ປະຈຸບັນນີ້ມີຝ່າຍມີເຈດຈຳນົງສະເໜີຢາກຈັດຊື້ຮຸ້ນຂອງບໍລິສັດ ຢຸນນານສາກົນ (ເປັນຜູ້ຖືຮຸ້ນລາຍໃຫ່ຍອັນດັບທີ່ໜຶ່ງ) ແລະບໍລິສັດ ຫັກຊັບລາວ-ຈີນ ຈຳກັດ (ເປັນຜູ້ຖືຮຸ້ນລາຍໃຫ່ຍອັນດັບທີ່ສາມ) ທີ່ຖືຄອງຮຸ້ນຂອງບໍລິສັດ ຊິມັງລາວ ມະຫາຊົນ,ຈຸດປະສົງຂອງການຈັດຊື້ຮຸ້ນດັ່ງກ່າວແມ່ນຢາກຊື້ຮຸ້ນຂອງບໍລິສັດ ແລະບໍລິສັດຂອງລາວຈະກາຍເປັນບໍລິສັດມາຫາຊົນໂດຍຜ່ານທາງອ້ອມ ແລະ ມີແຜນການພັດທະນາຂະແໜງການທ່ອງທ່ຽວ ແລະວັດທະນາທຳຢູ່ເຂດວັງວຽງ ແຂວງວຽງຈັນ, ຫວັງວ່າຈະເຊັນສັນຍາເຈດຈຳນົງການຈັດຊື້ຮຸ້ນກັບຜູ້ຖືຮຸ້ນທີ່ກ່ຽວຂ້ອງໃຫ້ໂດຍໄວເພື່ອດຳເນີນວຽກການປະເມີນ-ກວດກາຄົບຊຸດ. ຫຼັງຈາກນັ້ນທັງສອງຝ່າຍຈະມາປຶກສາລືກັນແລະຕົກລົງວ່າຈະດຳເນີນວຽກງານຕໍ່ໄປໃນການໂອນຮຸ້ນຫຼືບໍ່ ໂດຍອີງຕາມຜົນການປະເມີນ-ກວດກາຄົບຊຸດ,ສຸດທ້າຍຂໍອະນຸມັດຈາກລັດຖະບານເພື່ອສຳເລັດວຽກການປະກອບຮຸ້ນຂອງບໍລິສັດກັບຜູ້ຮ່ວມມືໃໝ່,ເລີ່ມຈັດຕັ້ງປະຕິບັດຕາມແຜນການດຳເນີນທຸລະກິດໃໝ່,ແຜນການລະອຽດມີດັ່ງລຸ່ມນີ້:

ເດືອນ 11/2020, ສຳເລັດວຽກເຈດຈຳນົງການຈັດຊື້ຮຸ້ນໃນເບື້ອງຕົ້ນ, ດຳເນີນວຽກການປະເມີນ-ກວດກາຄົບຊຸດຂອງບໍລິສັດ,ຈັດກອງປະຊຸມສະພາບໍລິຫານເພື່ອພິຈາລະນາ ແລະ ຮັບຮອງແຜນຟື້ນຟູ ແລະປະ ກອບຮຸ້ນຂອງບໍລິສັດລວມວຽກການໂອນຮຸ້ນ.

ເດືອນ 12/2020,ບໍລິສັດເຈດຈຳນົງຈັດຊື້ຮຸ້ນ,ປຶກສາກັບຜູ້ຖືຮຸ້ນແຕ່ລະຝ່າຍເພື່ອພິຈາລະນາເຫັນດີ ຫຼືບໍ່ເຫັນດີກ່ຽວກັບສືບຕໍ່ຊຸກຍູ້ຈັດຊື້ຮຸ້ນໃນຂັ້ນຕອນຕໍ່ໄປ ໂດຍອີງໃສ່ຜົນການປະເມີນ-ກວດກາຄົບຊຸດ;ຖ້າຕົກລົງສືບຕໍ່ດຳເນີນວຽກການໂອນຮຸ້ນ,ຜູ້ຖືຮຸ້ນແຕ່ລະຝ່າຍຈະລາຍງານໃຫ້ຂັ້ນເທິງ, ໂດຍອີງຕາມກົດລະບຽບຂອງແຕ່ລະຝ່າຍ ແລະເປີດກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາແລະຮັບຮອງ. ພ້ອມກັນນັ້ນ,ໃຫ້ບໍລິສັດຊິມັງລາວມະຫາຊົນຮ່ວມກັບຜູ້ເຈດຈຳນົງຈັດຊື້ຮຸ້ນເພື່ອຂຽນໜັງສືສະເໜີກ່ຽວກັບການປ່ຽນຂະແໜງອຸດສາຫະກຳຊິມັງເປັນຂະແໜງອື່ນຕໍ່ກະຊວງແຜນການແລະການລົງທຶນເພື່ອຂໍອະນຸມັດ.

ເດືອນ 1-2/2021,ຕົກລົງເຫັນດີ ຫຼືບໍ່ເຫັນດີເຊັນສັນຍາການໂອນຮຸ້ນໂດຍອີງຕາມຄວາມຄິດເຫັນຂອງລັດຖະບານ ແລະ ຜູ້ຖືຮຸ້ນແຕ່ລະຝ່າຍ,ຖ້າຫາກຕົກລົງເຊັນສັນຍາການໂອນຮຸ້ນແມ່ນໃຫ້ຝ່າຍຜູ້ຖືຮຸ້ນກັບຝ່າຍຈັດຊື້ຮຸ້ນສ້າງແຜນການຈັດຊື້ຮຸ້ນຢ່າງລະອຽດ.

2) ແຜນການສຳຮອງ: ສືບຕໍ່ຊອກຫານັກລົງທຶນໃໝ່ (ຄູ່ຮ່ວມມື) ແລະ ສືບຕໍ່ດຳເນີນຂະແໜງທຸລະກິດຊິມັງ,ຜ່ານການໂອນຮຸ້ນເພື່ອປະກອບຮຸ້ນ,ຖ້າທ້ອງຕະຫຼາດມີສະພາບການທີ່ດີຂຶ້ນ,ຈຶ່ງຟື້ນຟູການຜະລິດໂດຍໄວ.

ເດືອນ 3-4/2021 ເຂົ້າສູ່ຂັ້ນຕອນປະຕິບັດດຳເນີນວຽກການໂອນຮຸ້ນ,ຜູ້ຖືຮຸ້ນແຕ່ລະຝ່າຍແລະ ບໍລິສັດຊິມັງລາວ ມະຫາຊົນ ກັບ ຄູ່ຮ່ວມມືໃໝ່ຮ່ວມກັນເພື່ອດຳເນີນວຽກການໂອນຮຸ້ນຢ່າງລະອຽດ,ເລີ່ມ ຈັດຕັ້ງປະຕິບັດແຜນການດຳເນີນທຸລະກິດໃໝ່.

ຮອດເດືອນ 3/2021,ຖ້າຫາກບໍ່ສາມາດສຳເລັດວຽກການໂອນຮຸ້ນ ເພື່ອປະກອບຮຸ້ນຂອງ ບໍລິສັດ ສາມາດໃຊ້ວິທີອື່ນຄື : ໃຫ້ເຊົ່າ ຫຼືຮັບເໝົາໂຮງງານໃຫ້ຝ່າຍເຈດຈຳນົງສືບຕໍ່ດຳເນີນທຸລະກິດ. ສ່ວນການຖື ຮຸ້ນຂອງບໍລິສັດທີ່ມີຢູ່ຈະບໍ່ໄດ້ປ່ຽນແປງມີແຕ່ດຶງດູດຜູ້ຮ່ວມມືມາເຊົ່າ ຫຼືຮັບເໝົາໂຮງງານ ແລະມີການປັບ ປຸງໂຮງງານຕາມຄວາມເໝາະສົມ ແລະສະໜອງເງິນໝຸນວຽນສືບຕໍ່ຟື້ນຟູຜະລິດຕະພັນຊິມັງ ແລະດຳເນີນ ທຸລະກິດ.ແຜນການເຮັດວຽກແມ່ນ:ເດືອນ 3-4/2021,ປຶກສາກັບຄູ່ຮ່ວມມືໃໝ່ເພື່ອຄົ້ນຄວ້າວິທີການເຊົ່າ ຫຼືຮັບເໝົາຢ່າງລະອຽດ,ເປີດກອງປະຊຸມສະພາບໍລິຫານແລະກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາ ແລະຮັບ ຮອງ,ຫຼັງຈາກເຊັນສັນຍາການເຊົ່າຫຼືຮັບເໝົາຈຶ່ງເລີ່ມປະຕິບັດວຽກຟື້ນຟູການຜະລິດ.

ແຜນການດັ່ງກ່າວທີ່ກ່າວມາຂ້າງເທິງແມ່ນການໂອນຮຸ້ນເພື່ອປະກອບຮຸ້ນຂອງບໍລິສັດ ຫຼືວ່າດຶງດູດ ຄູ່ຮ່ວມມືເພື່ອເຊົ່າ ແລະ ຮັບເໝົາຟື້ນຟູທຸລະກິດກໍ່ຕາມລ້ວນແຕ່ຕ້ອງການບໍລິສັດຊິມັງລາວກັບຜູ້ຖືຮຸ້ນແຕ່ ລະຝ່າຍຮ່ວມກັນດຶງດູດຄູ່ຮ່ວມມືມາປຶກສາຫາລືກັນ ສຸດທ້າຍຈັດຕັ້ງປະຕິບັດໃຫ້ບໍລິສັດສາມາດຟື້ນຟູການ ດຳເນີນທຸລະກິດໃນຕໍ່ໜ້າໂດຍອີງຕາມກົດລະບຽບຂອງລັດຖະບານ ແລະ ການຕົກລົງກ່ຽວກັບຜົນປະ ໂຫຍດທີ່ສອດຄ່ອງກັບຜູ້ຖືຮຸ້ນແຕ່ລະຝ່າຍ.

V. ຂໍ້ສະເໜີທີ່ຂໍຊ່ວຍຈາກລັດຖະບານ

1) ຖ້າຫາກວ່າດຶງດູດນັກລົງທຶນມາປະກອບຮຸ້ນຂອງບໍລິສັດ,ອີງຕາມຄວາມຕ້ອງການໃນອະນາຄົດຂອງບໍລິ ສັດມີຄວາມຈຳເປັນປ່ຽນຂະແໜງຫຼັກເປັນຂະແໜງອື່ນໆ, ຫວັງວ່າພາກສ່ວນລັດຖະບານຈະໃຫ້ການສະ ໜັບສະໜຸນແລະອະນຸມັດ, ພ້ອມກັນນັ້ນ,ສືບຕໍ່ຮັກສາຍີ່ຫໍ້ເກົ່າເພື່ອຂະຫຍາຍທ່າແຮງທາງດ້ານຍີ່ຫໍ້ທີ່ຫຼາຍ ປີຜ່ານມາປະສົມກັນ.
2) ສະເໜີຂໍຕໍ່ອາຍຸສຳປະທານ : ໃນຂັ້ນຕອນດຳເນີນແຜນການປະກອບຮຸ້ນ ຫຼືຟື້ນຟູ ຈະແມ່ນການປ່ຽນຂະ ແໜງຫຼັກເປັນຂະແໜງອື່ນ ຫຼືສືບຕໍ່ຜະລິດຊິມັງກໍ່ຕາມລ້ວນແຕ່ຕ້ອງການລົງທຶນໃໝ່ເປັນຈຳນວນໃຫ່ຍເພື່ອ ປັບປຸງໂຮງງານ, ການລົງທຶນດັ່ງກ່າວໃນໄລຍະສັ້ນຈະບໍ່ສາມາດເກີດຂຶ້ນໄດ້ ສະນັ້ນ,ຂໍສະເໜີຕໍ່ລັດຖະບານ ອະນຸມັດເລື່ອນອາຍຸສຳປະທານເກົ່າຂອງບໍລິສັດ ຊິມັງລາວ ມະຫາຊົນ ສ່ວນການເລື່ອນຈັກປີແມ່ນຕ້ອງປຶກ ສາຫາລືກັບຜູ້ລົງທຶນໃໝ່ ຫຼືຄູ່ຮ່ວມມືໃໝ່.
3) ຂໍສະໜັບສະໜຸນຈາກລັດຖະບານເພື່ອຂໍຮັກສາສິດທິການຂຸດຄົ້ນແລະການສຳຫຼວດຂອງບໍ່ຫີນປູນແລະບໍ່ ຖ່ານຫີນລວມບໍ່ແຮ່ວັດຖຸດິບອື່ນໆທີ່ມີຢູ່ຂອງບໍລິສັດແລະສືບຕໍ່ເຊັນສັນຍາຂຸດຄົ້ນແລະສຳຫຼວດເກົ່າ.
4) ສະເໜີຂໍນະໂຍບາຍອາກອນຕ່າງໆ : 20 ຜ່ານມານີ້ບໍລິສັດ ຊິມັງລາວ ມະຫາຊົນ ໄດ້ເສຍອາກອນໃຫ້ລັດ ຖະບານລາວເປັນຈຳນວນບ້ວງໃຫ່ຍຕາມກົດລະບຽບອາກອນຢ່າງເຂັ້ມງວດປະຈຸບັນນີ້ບໍລິສັດພົບເຈີຄວາມ ຫຍຸ້ງຍາກກຳລັງຢູ່ໃນສະພາບໄລຍະປະກອບຮຸ້ນຫຼືຟື້ນຟູ,ສະນັ້ນສະເໜີເຖິງລັດຖະບານ ແລະພະແນກການ ທີ່ກ່ຽວຂ້ອງຈົ່ງພິຈາລະນາຫຼຸດຜ່ອນອາກອນຕ່າງໆ ໃນຊ່ວງໄລຍະທີ່ເໝາະສົມເປັນຕົ້ນແມ່ນອາກອນມູນຄ່າ

ເພີ່ມ,ອາກອນລາຍຮັບ,ອາກອນກຳໄລ,ອາກອນຊັບພະຍາກອນຕ່າງໆ ເພື່ອຊ່ວຍບໍລິສັດຜ່ານຄວາມຫຍຸ້ງຍາກໃຫ້ໄດ້ໂດຍໄວ.

5) ຂໍຊ່ວຍເຫຼືອແກ້ໄຂບັນຫາການແກ່ຍາວຊຳລະສະສາງໜີ້ຕ້ອງຮັບຂອງບໍລິສັດ,ຂໍຊ່ວຍຈາກພະແນກທີ່ກ່ຽວຂ້ອງຂອງລັດຖະບານຊ່ວຍຕິດຕາມລູກຄ້າທີ່ຕິດໜີ້ກັບບໍລິສັດ ໃຫ້ຊຳລະຂອງບໍລິສັດໄດ້ໂດຍໄວ ໂດຍຜ່ານທາງອ້ອມ ຫຼືທາງກົງ ເພື່ອເຮັດໃຫ້ບໍລິສັດສາມາດແກ້ໄຂບັນຫາໜີ້ສິນຫຼັງຈາກຢຸດຕິການຜະລິດ ເພື່ອເຮັດໃຫ້ບໍລິສັດສາມາດຫຼຸດຜ່ອນພາລະ ເພື່ອບັນລຸການພັດທະນາໃຫ້ໄດ້ໂດຍໄວ.

ສະນັ້ນ, ຈຶ່ງສະໄດ້ລາຍງານມາຍັງທ່ານເພື່ອແກ້ໄຂ ແລະພິຈາລະນາຕາມຄວາມເໝາະສົມດ້ວຍ

ຮຽນມາດ້ວຍຄວາມນັບຖືຢ່າງສູງ.

ບໍລິສັດ ຊີມັງລາວ ມະຫາຊົນ

ເອກະສານຕິດຄັດ : 03

ໃບມອບສິດ

1.ຂ້າພະເຈົ້າ.....ສັນຊາດ.....

ບັດປະຈຳຕົວ/ບັດສະປໍເລກທີ..... ID card/passport NO:.....

ເຮືອນເລກທີ່.....ບ້ານ.....ເມືອງ.....ແຂວງ.....

ເປັນຜູ້ຖືຮຸ້ນຂອງ ບໍລິສັດຊີມັງລາວ ມະຫາຊົນ

ມີຮຸ້ນທີ່ຖືຈຳນວນ.....ຮຸ້ນຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງ

2.ຂໍມອບໝາຍ ທ່ານ/ທ່ານນາງ.....ບັດປະຈຳຕົວ/ບັດສະປໍເລກທີ.....

ເຮືອນເລກທີ່.....ບ້ານ.....ເມືອງ.....ແຂວງ.....

ໃຫ້ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມ ແລະ ລົງຄະແນນສຽງແທນຂ້າພະ ເຈົ້າຢູ່ໃນກອງປະຊຸມວິສາມັນຜູ້ຖືຮຸ້ນ ປະຈຳປີ 2020 ຂອງ ບໍລິສັດຊີມັງລາວມະຫາຊົນ,ທີ່ຈະຈັດຂຶ້ນໃນວັນທີ 28 ທັນວາ 2020 ຢູ່ຫ້ອງປະຊຸມ ໃຫ່ຍ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ ນະຄອນນະຄອນຫຼວງວຽງຈັນ.

3. ຂ້າພະເຈົ້າ ອະນຸຍາດໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າ ຢູ່ໃນກອງປະຊຸມດັ່ງນີ້(ເລືອກເອົາໜຶ່ງ ຈາກ ສອງທາງເລືອກລຸ່ມນີ້)

1. □ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງຄະແນນສຽງໃນທຸກໆບັນຫາແທນຂ້າພະເຈົ້າ ຕາມທີ່ຜູ້ກ່ຽວສົມຄວນ;ຫຼື
2. □ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າດັ່ງນີ້ (ຖ້າເລືອກຂໍ້ນີ້, ກະລຸນາເລືອກລົງ ຄະແນນເຫັນດີ ຫຼື ບໍ່ເຫັນດີ ໃນທຸກໆວາລະລຸ່ມນີ້):

ວາລະທີ 1: ພິຈາລະນາ ແລະຮັບຮອງແຜນການປະກອບຮຸ້ນ ແລະຟື້ນຟູທຸລະກິດຂອງບໍລິສັດ

□ເຫັນດີ/approve □ບໍ່ເຫັນດີ/disapprove

3. ການລົງຄະແນນສຽງຂອງຜູ້ຕາງໜ້າທີ່ບໍ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າບໍ່ຖືກຕ້ອງ ແລະບໍ່ແມ່ນການລົງຄະ ແນນຂອງຂ້າພະເຈົ້າ.
4. ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການຂອງຕົນໃນການລົງຄະແນນສຽງໃນວາລະໃດໜຶ່ງ ຫຼື ລະບຸໄວ້ ບໍ ຈະແຈ້ງ ໃຫ້ຖືວ່າຂ້າພະເຈົ້າລົງຄະແນນສຽງເຫັນດີ.
5. ທຸກການກະທຳໃດຂອງຜູ້ຕາງໜ້າໃນກອງປະຊຸມ ທີ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າຂ້າພະເຈົ້າ ໄດ້ກະທຳເອງ ທຸກປະການ.

ທີ່.....ວັນທີ...../.....2020

ເຊັນຜູ້ຖືຮຸ້ນທີ່ມອບໝາຍ **ເຊັນຜູ້ຕາງໜ້າ**

ແຜນທີ່ອາຄານຕະຫຼາດຫຼັກຊັບລາວ



ໝາຍເຫດ:ເອກະສານທັງໝົດນີ້ໃຫ້ຖືເອົາສະບັບພາສາລາວເປັນຫຼັກ